ການຟື້ນຟູຄວາມສົມບູນແຫ່ງ ພຣະກິດຕິຄຸນຂອງພຣະເຢຊູຄຣິດ

ການປະກາດຕໍ່ໂລກເນື່ອງໃນວາລະຄົບຮອບສອງຮ້ອຍປີ

ຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ

ພວກເຮົາປະກາດຢ່າງໜັກແໜ້ນວ່າ ພຣະເຈົ້າຮັກລູກໆຂອງພຣະອົງ ໃນທຸກປະຊາຊາດຂອງໂລກ. ພຣະເຈົ້າອົງເປັນພຣະບິດາໄດ້ມອບການກຳເນີດອັນສູງສົ່ງ, ພຣະຊົນຊີບທີ່ຫາອັນປຽບບໍ່ໄດ້, ແລະ ການເສຍສະລະຊົດໃຊ້ອັນບໍ່ມີຂອບເຂດຂອງພຣະບຸດທີ່ຮັກຂອງພຣະອົງ, ພຣະເຢຊູຄຣິດໃຫ້ເຮົາ. ດ້ວຍອຳນາດຂອງພຣະບິດາ, ພຣະເຢຊູໄດ້ລຸກຂຶ້ນອີກ ແລະ ໄດ້ເອົາຊະນະຄວາມຕາຍ. ພຣະອົງເປັນພຣະຜູ້ຊ່ວຍໃຫ້ລອດຂອງເຮົາ, ເປັນຕົວຢ່າງຂອງເຮົາ, ແລະ ເປັນພຣະຜູ້ໄຖ່ຂອງເຮົາ.

ເມື່ອສອງຮ້ອຍປີກ່ອນ, ໃນວັນທີ່ສວຍງາມຂອງລະດູໃບໄມ້ປົ່ງ ໃນປີ 1820, ຊາຍໜຸ່ມໂຈເຊັບ ສະມິດ, ຢາກຮູ້ວ່າສາດສະໜາຈັກໃດທີ່ເພິ່ນຄວນເຂົ້າຮ່ວມ, ຈຶ່ງໄດ້ເຂົ້າໄປໃນປ່າ ຢູ່ໃກ້ບ້ານຂອງເພິ່ນ ໃນເຂດເໜືອຂອງລັດນິວຢອກ, ສະຫະລັດອາເມຣິກາ ເພື່ອອະທິຖານ. ເພິ່ນມີຄຳຖາມກ່ຽວກັບຄວາມລອດຂອງຈິດວິນຍານຂອງເພິ່ນ ແລະ ໄວ້ວາງໃຈວ່າພຣະເຈົ້າຈະຊີ້ນຳເພິ່ນ.

ໃນຄວາມຖ່ອມຕົວ, ພວກເຮົາປະກາດວ່າ ໃນການຕອບຄຳອະທິຖານຂອງເພິ່ນ, ພຣະເຈົ້າອົງເປັນພຣະບິດາ ແລະ ພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ, ໄດ້ມາປະກົດຕໍ່ໂຈເຊັບ ແລະ ໄດ້ເລີ່ມຕົ້ນເວລາທີ່ “ທຸກສິ່ງຈະຖືກຕັ້ງຂຶ້ນໃໝ່” (ກິດຈະການ 3:21) ດັ່ງທີ່ຖືກບອກໄວ້ລ່ວງໜ້າຢູ່ໃນພຣະຄຣິສຕະທຳຄຳພີ. ຢູ່ໃນພາບນິມິດນີ້, ເພິ່ນໄດ້ຮຽນຮູ້ວ່າ ຫລັງຈາກການຕາຍຂອງພວກອັກຄະສາວົກລຸ້ນດັ້ງເດີມ, ສາດສະໜາຈັກຂອງພຣະຄຣິດໃນພຣະຄຳພີໃໝ່ໄດ້ສູນຫາຍໄປຈາກໂລກນີ້. ໂຈເຊັບຈະເປັນເຄື່ອງມືໃນການນຳສາດສະໜາຈັກກັບຄືນມາ.

ພວກເຮົາຢືນຢັນວ່າ ພາຍໃຕ້ການຊີ້ນຳຂອງພຣະບິດາ ແລະ ພຣະບຸດ, ທູດຈາກສະຫວັນໄດ້ມາແນະນຳໂຈເຊັບ ແລະ ສະຖາປະນາສາດສະໜາຈັກຂອງພຣະເຢຊູຄຣິດຄືນໃໝ່. ໂຢຮັນບັບຕິສະໂຕທີ່ໄດ້ຟື້ນຄືນຊີວິດແລ້ວໄດ້ຟື້ນຟູສິດອຳນາດຂອງການບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ. ສາມຄົນຂອງກຸ່ມອັກຄະສາວົກສິບສອງລຸ້ນດັ້ງເດີມ—ເປໂຕ, ຢາໂກໂບ, ແລະ ໂຢຮັນ—ໄດ້ຟື້ນຟູການເປັນອັກຄະສາວົກ ແລະ ຂໍກະແຈຂອງສິດອຳນາດຖານະປະໂລຫິດ. ຄົນອື່ນໆກໍໄດ້ມາຄືກັນ, ລວມທັງເອລີຢາ, ຜູ້ຊຶ່ງໄດ້ຟື້ນຟູສິດອຳນາດເພື່ອໃຫ້ເຕົ້າໂຮມຄອບຄົວເຂົ້າກັບຕະຫລອດໄປ ໃນຄວາມສຳພັນນິລັນດອນ ທີ່ເໜືອກວ່າຄວາມຕາຍ.

ພວກເຮົາເປັນພະຍານອີກວ່າ ໂຈເຊັບ ສະມິດ ໄດ້ຮັບຂອງປະທານ ແລະ ອຳນາດຂອງພຣະເຈົ້າ ເພື່ອໃຫ້ແປບັນທຶກບູຮານ: ພຣະຄຳພີມໍມອນ—ປະຈັກພະຍານອີກຢ່າງໜຶ່ງເຖິງ ພຣະເຢຊູຄຣິດ. ຢູ່ໃນບັນທຶກທີ່ສັກສິດນີ້ ແມ່ນລວມທັງເລື່ອງລາວກ່ຽວກັບການປະຕິບັດສາດສະໜາກົດເປັນສ່ວນຕົວຂອງພຣະເຢຊູຄຣິດ ໃນບັນດາຜູ້ຄົນຢູ່ຊີກໂລກເບື້ອງຕາເວັນຕົກ ບໍ່ຄົນຫລັງຈາກການຟື້ນຄືນພຣະຊົນຂອງພຣະອົງ. ມັນສິດສອນເຖິງຈຸດປະສົງຂອງຊີວິດ ແລະ ອະທິບາຍຄຳສອນຂອງພຣະຄຣິດ, ຊຶ່ງເປັນຈຸດໃຈກາງຂອງຈຸດປະສົງນັ້ນ. ໂດຍທີ່ເປັນພຣະຄຳພີຄຽງຄູ່ໄປກັບພຣະຄຣິສຕະທຳຄຳພີ, ພຣະຄຳພີມໍມອນເປັນພະຍານວ່າ ມະນຸດທຸກຄົນເປັນບຸດ ແລະ ທິດາຂອງພຣະບິດາຜູ້ສະຖິດຢູ່ໃນສະຫວັນທີ່ຊົງຮັກ, ວ່າພຣະອົງມີແຜນແຫ່ງສະຫວັນສຳລັບຊີວິດຂອງເຮົາ, ແລະ ວ່າພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ, ກ່າວໃນທຸກວັນນີ້ ເທົ່າໆກັບໃນສະໄໝກ່ອນ.

ພວກເຮົາປະກາດວ່າ ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ຊຶ່ງໄດ້ຖືກຈັດຕັ້ງຂຶ້ນໃນວັນທີ 6 ເດືອນເມສາ, 1830, ຄືສາດສະໜາຈັກຂອງພຣະຄຣິດໃນພຣະຄຳພີໃໝ່ທີ່ຖືກຟື້ນຟູ. ສາດສະໜາຈັກນີ້ຍຶດໝັ້ນຢູ່ທີ່ພຣະຊົນຊີບທີ່ດີພ້ອມຂອງຫີນເສົາເອກອັນສຳຄັນ, ພຣະເຢຊູຄຣິດ, ແລະ ໃນການຊົດໃຊ້ອັນບໍ່ມີຂອບເຂດຂອງພຣະອົງ ແລະ ໃນການຟື້ນຄືນພຣະຊົນທີ່ຈິງແທ້ຂອງພຣະອົງ. ອີກເທື່ອໜຶ່ງ ພຣະເຢຊູຄຣິດໄດ້ເອີ້ນອັກຄະສາວົກ ແລະ ໄດ້ມອບສິດອຳນາດຖານະປະໂລຫິດໃຫ້ພວກເພິ່ນ. ພຣະອົງເຊື້ອເຊີນເຮົາທຸກຄົນໃຫ້ມາຫາພຣະອົງ ແລະ ມາຫາສາດສະໜາຈັກຂອງພຣະອົງ, ເພື່ອຮັບເອົາພຣະວິນຍານບໍລິສຸດ, ພິທີການແຫ່ງຄວາມລອດ, ແລະ ຄວາມສຸກທີ່ຍືນຍາວ.

ສອງຮ້ອຍປີໄດ້ຜ່ານພົ້ນໄປນັບຕັ້ງແຕ່ພຣະເຈົ້າອົງເປັນພຣະບິດາ ແລະ ພຣະບຸດທີ່ຮັກຂອງພຣະອົງ, ພຣະເຢຊູຄຣິດ ໄດ້ເລີ່ມຕົ້ນການຟື້ນຟູນີ້. ຫລາຍລ້ານຄົນຕະຫລອດທົ່ວໂລກໄດ້ຮັບເອົາຄວາມຮູ້ເຫລົ່ານີ້ຂອງເຫດການທີ່ຖືກທຳນາຍໄວ້.

ພວກເຮົາຍິນດີທີ່ຈະປະກາດວ່າ ການຟື້ນຟູທີ່ສັນຍາຍັງດຳເນີນໄປໜ້າ ຜ່ານທາງການເປີດເຜີຍອັນຕໍ່ເນື່ອງ. ແຜ່ນດິນໂລກຈະບໍ່ເໝືອນເດີມອີກ, ຂະນະທີ່ພຣະເຈົ້າ “ຮວບຮວມສິ່ງສາລະພັດໄວ້ໃນພຣະຄຣິດ” (ເອເຟໂຊ 1:10).

ດ້ວຍຄວາມຄາລະວະ ແລະ ຄວາມຮູ້ບຸນຄຸນ, ພວກເຮົາໃນຖານະອັກຄະສາວົກຂອງພຣະອົງ ຂໍເຊື້ອເຊີນທຸກຄົນ ໃຫ້ຮູ້—ດັ່ງທີ່ພວກເຮົາຮູ້—ວ່າສະຫວັນເປີດຢູ່. ພວກເຮົາຢືນຢັນວ່າ ພຣະເຈົ້າກຳລັງເຮັດໃຫ້ພຣະປະສົງຂອງພຣະອົງເປັນທີ່ຮູ້ຈັກແກ່ບຸດ ແລະ ທິດາຂອງພຣະອົງ. ພວກເຮົາຢືນຢັນວ່າ ຜູ້ທີ່ສຶກສາຂ່າວສານເລື່ອງການຟື້ນຟູດ້ວຍການອະທິຖານ ແລະ ກະທຳຕາມດ້ວຍສັດທາ ຈະໄດ້ຮັບພອນແຫ່ງການເປັນພະຍານດ້ວຍຕົວເອງ ເຖິງຄວາມສູງສົ່ງ ແລະ ຈຸດປະສົງຂອງການຟື້ນຟູ ເພື່ອກະກຽມໂລກສຳລັບການສະເດັດມາຄັ້ງທີສອງຂອງພຣະຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ລອດຂອງເຮົາ, ພຣະເຢຊູຄຣິດ, ທີ່ສັນຍາໄວ້.

ປະທານຣະໂຊ ເອັມ ແນວສັນ ໄດ້ອ່ານການປະກາດນີ້ ໃນຄຳປາໄສຂອງເພິ່ນ ຢູ່ກອງປະຊຸມໃຫຍ່ສາມັນປະຈຳປີ
ຄັ້ງທີ *190*, ເມື່ອວັນທີ *5* ເດືອນເມສາ, *2020*, ໃນເມືອງເຊົາເລັກ, ລັດຢູທາ.

Unofficial poster layout of the text published on churchofjesuschrist.org. Not an official publication of The Church of Jesus Christ of Latter-day Saints. Generated by Urim, urim.samuelbaird.com